# ສສຊ ເຂດເລືອກຕັ້ງທີ 16 ເຜີຍແຜ່ຜົນສຳເລັດກອງປະຊຸມສະພາແຫ່ງຊາດ ເທື່ອທີ 9 ສະໄໝທີ 6

*(ຂປລ): ເມື່ອທ້າຍເດືອນຜ່ານມາ, ພະນັກງານການນຳ ພະນັກງານວິຊາການ ແລະ ພະນັກງານປະຕິວັດອາ ວຸໂສຫຼາຍກ່ວາ 100 ຄົນ ໄດ້ຮັບຟັງຜົນສຳເລັດຂອງກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ VI ຈາກທ່ານ ພອນເພັດ ຄິວລະວົງ ຮອງເຈົ້າແຂວງເຊກອງ ທັງເປັນຄະນະສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 16 ແຂວງເຊກອງ.

ທ່ານ ພອນເພັດ ຄິວລະວົງ ເວົ້າວ່າ: ກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ VI ໄດ້ໄຂຂຶ້ນໃນລະຫ່ວາງວັນທີ 14-30 ມິຖຸນາ 2010 ເຊິ່ງກອງປະຊຸມໄດ້ສຸມໃສ່ຄົ້ນຄ້ວາ ພິຈາລະນາ ແລະ ຮັບຮອງເອົາບັນຫາ ສຳຄັນຂອງປະເທດເຮົາໂດຍສະເພາະຮັບຮອງບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດສົກປີ 2009-2010 ແລະ ທິດທາງງົບປະມານ ສົກປີ 2010-2011 ແລະ ການຄຸ້ມຄອງນຳໃຊ້ທີ່ດິນ. ນອກນີ້ກອງປະຊຸມດັ່ງກ່າວຍັງໄດ້ຮັບຮອງເອົາ ກົດໝາຍ 3 ສະບັບຄື: ກົດໝາຍວ່າດ້ວຍສະຖິຕິ ປະກອບມີ 10 ພາກ 7 ໝວດ 67 ມາດຕາ, ກົດໝາຍວ່າດ້ວຍຜູ້ຊົມໃຊ້ມີ 9 ພາກ 15 ໝວດ 76 ມາດຕາ ແລະ ກົດໝາຍວ່າດ້ວຍການສະກັດກັ້ນ ແລະຕ້ານເຊື້ອພະຍາດ HIV ມີ 12 ພາກ 10 ໝວດ 69 ມາດຕາ ທັງໄດ້ຮັບຮອງເອົາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 6 ແລະທິດທາງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 7 ຂອງຊາດຕື່ມອີກ.

ທ່ານຫົວໜ້າສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 16 ແຂວງເຊກອງ ຍັງໄດ້ເລົ່າຄືນວັນສ້າງຕັ້ງລັດຖະທຳມະນູນ ຄົບຮອບ 19 ປີ(15 ສິງຫາ ປີ 1991-19 ສິງຫາ ປີ 2010) ຊຶ່ງລັດຖະທຳມະນູນຂອງຊາດເຮົາແມ່ນໝາກຜົນລວມຍອດສະຕິປັນຍາ ແລະ ການປະກອບຄຳເຫັນຂອງປະຊາຊົນໃນທົ່ວປະເທດ ທີ່ສ່ອງແສງເຖິງເຈດຈຳນົງ ອັນຍາວນານ ແລະ ຄວາມຕັດສິນໃຈ ຢ່າງແຮງກ້າຂອງວົງຄະນະຍາດແຫ່ງຊາດ ທີ່ຈະພ້ອມກັນສູ່ຊົນໃຫ້ບັນລຸຈຸດໝາຍສ້າງປະເທດລາວໃຫ້ເປັນປະເທດ ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ ຕະຫຼອດໄປ.